# ຜະລິດຕະພັນໄປສະນີ (Postal Producs)

"ຜະລິດຕະພັນໄປສະນີ" ແມ່ນບັນດາເຄື່ອງຝາກປະເພດຕ່າງໆ ທີ່ຈັດແບ່ງໄປຕາມຄຸນລັກສະນະ, ຂະໜາດ ແລະ ນໍ້າໜັກ ທັງນີ້ເພື່ອເຮັດໃຫ້ການຫຸ້ມຫໍ່ ແລະຈັດສົ່ງ ມີຄວາມສະດວກ ແລະວ່ອງໄວ ຕາມຂໍ້ຕົກລົງວ່າດ້ວຍມາດຕະຖານຜະລິດຕະພັນ ແລະຄຸນນະພາບການບໍລິການໄປສະນີ ສະບັບເລກທີ 1918/ປທສ ລົງວັນທີ 16 ພຶດສະພາ 2017, ຊຶ່ງໄດ້ຈັດແບ່ງມາດຕະຖານຜະລິດຕະພັນໄປສະນີ ອອກເປັນ 3 ປະເພດ ຄື ປະເພດເອກະສານ ຫຼື ໄປສະນີພັນ, ພັດສະດຸໄປສະນີ ແລະໂລຊິດສະຕິກໄປສະນີ.

## I. ນໍ້າໜັກຜະລິດຕະພັນ

**1. ໄປສະນີພັນ (Letter Post):**

ແມ່ນເຄື່ອງຝາກປະເພດເອກະສານ, ໜັງສື, ຈົດໝາຍ, ສື່ສິ່ງພິມ ແລະສິ່ງຂອງຫໍ່ນ້ອຍຕ່າງໆ ທີ່ບໍ່ແມ່ນເອກະສານ ຊຶ່ງມີນໍ້າໜັກ ດັ່ງນີ້:

| ຮູບແບບໄປສະນີພັນ | ນໍ້າໜັກຕໍ່ຫໍ່ ຫຼື ຊອງ |
|---|---|
| ຈົດໝາຍ (Letter) | ບໍ່ເກີນ 2 ກິໂລ |
| ໄປສະນີບັດ (Post card) | ບໍ່ເກີນ 2 ກິໂລ |
| ສິ່ງພິມ (Printed Papers) | ບໍ່ເກີນ 2 ກິໂລ |
| ສິ່ງພິມທີ່ເປັນໜັງສືເຫຼັ້ມດຽວ ຫຼື ຫຼາຍເຫຼັ້ມໃນຫໍ່ດຽວກັນສາມາດຝາກສົ່ງໄດ້ | ບໍ່ເກີນ 5 ກິໂລ |
| ຖົງເມພິເສດ (M Bag) | ບໍ່ເກີນ 30 ກິໂລ |
| ເຄື່ອງສໍາຫຼັບຄົນຕາບອດ (Items for Blind) | ບໍ່ເກີນ 7 ກິໂລ |
| ສິ່ງຂອງຫໍ່ນ້ອຍ (Small Packets) | ບໍ່ເກີນ 2 ກິໂລ |

**2. ພັດສະດຸໄປສະນີ (Parcel Post):** ນໍ້າໜັກແຕ່ 2.1 ກິໂລ - 50 ກິໂລຕໍ່ຫໍ່ ຫຼື ຊອງ

**3. ໂລຊິດສະຕິກໄປສະນີ (Logistics Post):** ນໍ້າໜັກແຕ່ 50.1 ກິໂລ - 200 ກິໂລຕໍ່ອັນ ຫຼື ແກັດ, ກ່ອງ ຕາມຮູບຊົງຂອງເຄື່ອງຝາກ.

## II. ຂະໜາດຜະລິດຕະພັນ

**1. ໄປສະນີພັນ (Letter Post):**

| ຮູບແບບໄປສະນີພັນ | ນໍ້າໜັກຕໍ່ຫໍ່ ຫຼື ຊອງ |
|---|---|
| ຊອງຂະໜາດນ້ອຍ (Small Envelope) | - ຄວາມໜາ 5 ມມ<br>- ຂະໜາດນ້ອຍ 90 x 140 ມມ<br>- ຂະໜາດໃຫຍ່ 165 x 245 ມມ |
| ຊອງຂະໜາດໃຫຍ່ (Larger Envelope) | - ຄວາມໜາ 20 ມມ<br>- ຂະໜາດນ້ອຍ 90 x 140 ມມ<br>- ຂະໜາດໃຫຍ່ 305 x 381 ມມ |

| | |
|---|---|
| ໄປສະນີບັດ (Post card) | - ຂະໜາດນ້ອຍ 90 x 140 ມມ<br>- ຂະໜາດໃຫຍ່ 120 x 381 ມມ |
| ສິ່ງພິມ, ສິ່ງຂອງຫໍ່ນ້ອຍ (Printed Papers and Small packets) ທີ່ເປັນສີ່ແຈສາກ | - ຂະໜາດນ້ອຍ 90 x 140 ມມ<br>- ຂະໜາດໃຫຍ່ 990 x 600 ມມ |
| **ສິ່ງພິມ, ສິ່ງຂອງຫໍ່ນ້ອຍ (Printed Papers and Small packets) ທີ່ເປັນກົ້** | - ຂະໜາດນ້ອຍ: ສອງເທົ່າຂອງເສັ້ນຜ່ານສູນກາງບໍ່ຫຼຸດ 170 ມມ ແລະລວງຍາວບໍ່ເກີນ 100 ມມ<br>- ຂະໜາດໃຫຍ່: ສອງຂອງເສັ້ນຜ່າສູນກາງບໍ່ຫຼຸດ 1,000 ມມ ແລະລວງຍາວບໍ່ເກີນ 900 ມມ |

2. **ພັດສະດຸໄປສະນີ (Parcel Post):** ຂະໜາດແຕ່ລະຂ້າງບໍ່ເກີນ 2,000 ມມ ແລະລວງຍາວຮອບສູງສຸດບໍ່ເກີນ 3,000 ມມ
3. **ໂລຊິດສະຕິກໄປສະນີ (Logistics Post):** ຂະໜາດຂ້າງລະ 150x200x150 ຊມ (ກວ້າງxຍາວxສູງ)